ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະລາດ ວັດທະນາຖາວອນ

------=== 000 ===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 1906008/.....ມທທຊ

ນະຄອນຫຼວງວຽງຈັນ, ວັນທີ: 08/06/2019

ຮຽນ : ທ່ານຫົວໜ້າ ສຳນັກງານຄະນະກຳມະການ ຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 3/2019, ທີ່ຈະຈັດຂຶ້ນໃນວັນທີ 8 ມິຖຸນາ 2019

- ອີງຕາມລະບຽບວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ "ມທທຊ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນຂອງ ກອງ ປະຊຸມສະພາບໍລິຫານ ຄັ້ງທີ 3/2019 ທີ່ຈະຈັດຂຶ້ນ ໃນວັນທີ 8 ມິຖຸນາ 2019, ເຊິ່ງມີວາລະຮັບຮອງເອົາບັນຫາທີ່ ສຳຄັນ ດັ່ງລາຍລະອຽດດັ່ງນີ້:

1. ຮັບຊາບຜົນການດຳເນີນງານໃນຮອບ 5 ເດືອນ ປີ 2019 ສິ້ນສຸດວັນທີ 31 ພຶດສະພາ 2019
2. ຮັບຮອງງົບການເງິນ (ບໍ່ໄດ້ກວດສອບ) ຂອງບໍລິສັດ ສຳຫຼັບໄຕມາດທີ່ 1 ປີ 2019 ສິ້ນສຸດວັນທີ 31 ມີນາ 2019
3. ອະນຸມັດໃຫ້ເປີດໜ່ວຍບໍລິການໃໝ່ ໃນແຂວງສະຫວັນນະເຂດ
4. ອະນຸມັດໃຫ້ບໍລິການຜະລິດຕະພັນເຊົ່າສິນເຊື່ອ ສຳຫຼັບລົດໄຖນາ ຂະໜາດນ້ອຍ

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ດ້ວຍຄວາມນັບຖືຢ່າງສູງ
ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

(ທ່ານ ມານົບ ຕຣີລິດວິໄລ)